# ການນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ: ທີ່ນທາງສູ່ຄວາມຫຼາກຫຼາຍດ້ານແຫຼ່ງລາຍຮັບໃນຊົນນະບົດ
# Sustainable use of NTFPs as pathway for rural income diversification

NAFRI' council meeting:
2/**6**/2022

<u>ທີມງານຄົ້ນຄວ້າ:</u>

ປອ. ສົມອນ ວົງຄຳຮໍ່, ພ້ອມຄະນະ,
ສູນຄົ້ນຄວ້າປ່າໄມ້
ສະຖາບັນຄົ້ນຄວ້າກະສິກຳ, ປ່າໄມ້ ແລະ ພັດທະນາຊົນນະບົດ

# ສາລະບານ

1. ພາກສະເໜີ
2. ຈຸດປະສົງ
3. ວິທີການຄົ້ນຄວ້າ
4. ຜົນໄດ້ຮັບ
5. ສະຫຼຸບ
6. ຂໍ້ສະເໜີແນະ



*Taken by Vongkhamho, S. (2018) Gouangtung Cardamom plantation in NamNgern village, Namor district, Oudomxay province.*

# 1. ພາກສະເໜີ

## ການສູ້ຊົນຫຼຸດຜ່ອນຄວາມທຸກຍາກຢູ່ຊົນນະບົດຂອງ ສປປ ລາວ

- ສປປ ລາວ, ປະຊາຊົນສ່ວນໃຫຍ່ດຳລົງຊີວິດຕາມວິຖີທຳມະຊາດ-ລາຍຮັບຕ່ຳ, ລັດຖະບານ ໄດ້ກຳນົດເປົ້າໝາຍອອກຈາກປະເທດດ້ອຍພັດທະນາໃນປີ 2024.
- ວຽກງານການຜະລິດກະສິກຳ ແລະ ປ່າໄມ້ແມ່ນໝາກຫົວໃຈແຫ່ງການພັດທະນາປະເທດຊາດ: ປະກອບສ່ວນ 25% ຂອງລວມຍອດຜະລິດຕະພັນພາຍໃນ GDP.
- 70% ຂອງພື້ນທີ່ດິນ ແມ່ນເປັນເຂດພູດອຍ-ພູພຽງ, ເຊິ່ງມີຄວາມຈຳກັດດ້ານເນື້ອທີ່ທຳການຜະລິດກະສິກຳ. ແຕ່ວ່າ, ເປັນເຂດທີ່ມີຄວາມຮັ່ງມີທາງດ້ານຊີວະນາໆພັນ, ໂດຍສະເພາະແມ່ນເຄື່ອງປ່າຂອງດົງ.
- ເຄື່ອງປ່າຂອງດົງ ແມ່ນໝາຍເຖິງທຸກພາກສ່ວນຂອງພືດ-ຕົ້ນໄມ້ທີ່ເກີດຂຶ້ນຕາມປ່າທຳມະຊາດ ຫຼື ດ້ວຍການປູກ; ປະກອບມີ ເຫງົ້າ, ລຳຕົ້ນ, ເຄືອ, ຫົວ, ຮາກ, ຕາ, ໜໍ່, ໃບ, ດອກ, ໝາກ, ເມັດ ຫຼື ແກ່ນ, ເປືອກ, ຢາງ, ນ້ຳມັນ, ເຫັດ, ນ້ຳເຜີ້ງ ແລະ  ລວມເຖິງພືດເປັນຢາສະໝຸນໄພ (ກົດໝາຍປ່າໄມ້, 2019).

## ບົດບາດຂອງ ເຄື່ອງປ່າຂອງດົງ ຕໍ່ເສດຖະກິດຊົນນະບົດ




Source: MoIC, 2022




Source: MoIC, 2022

ສິນຄ້າກະສິກຳ ແລະ ປ່າໄມ້ ກວມເອົາ ສະເລ່ຍ 15% ຂອງມູນຄ່າສົ່ງອອກທັງໝົດ. ໃນຂະນະທີ່ ສິນຄ້າເຄື່ອງຂອງດົງ ກວມເອົາ 1.28% ຂອງມູນຄ່າສິນຄ້າກະສິກຳ ແລະ ປ່າໄມ້ ທີ່ສົ່ງອອກໄປຍັງຕະຫຼາດຕ່າງປະເທດ

# 1. ພາກສະເໜີ(ຕໍ່)

**ບັນຫາທີ່ຄວນເອົາໃຈໃສ່ໃນການແກ້ໄຂ**

- ເຄື່ອງປ່າຂອງດົງມີຄວາມຕ້ອງການສູງຈາກຕະຫຼາດຕ່າງປະເທດ ໂດຍສະເພາະ ແມ່ນປະເທດໃກ້ຄຽງ; ຈີນ, ຫວຽດນາມ ແລະ ໄທ ເປັນສາເຫດໜຶ່ງສິ່ງຜົນໃຫ້ຂຸດຄົ້ເກີດຄວາມສາມາດຂອງຊັບພະຍາກອນ (ເຄືອແຮມ, ຫວາຍ ແລະ ອື່ນໆ.)
- ຄວາມຈິງແລ້ວ, ສະພາບການຊື້-ຂາຍເຄື່ອງປ່າຂອງດົງໃນປັດຈຸບັນ ແມ່ນກະແຈກກະຈາຍ ແລະ ຂາດການຮ່ວມມືເຊິ່ງກັນ ແລະ ກັນ. ເຄື່ອງປ່າຂອງດົງສ່ວນຫຼາຍຖືກສົ່ງອອກ ເປັນວັດຖຸດິບ, ຂາດການປຸງແຕ່ງເພີ້ມມູນຄ່າໃຫ້ແກ່ສິນຄ້າ.
- ຜະລິດຕະພັນເຄື່ອງປ່າຂອງດົງ ທີ່ເກັບກູ້ຈາກສວນປກ ຫຼື ພື້ນທີ່ກະສິກຳ ຍັງຖືກຈັດເປັນຜົນຜະລິດຈາກປ່າທຳມະຊາດ ສິ່ງຜົນໃຫ້ຕ້ອງເສຍພາສີອາກອນແບບບໍ່ເໝາະສົມ

**ບາດກ້າວສູ່ຄວາມສຳເລັດໃນການຄຸ້ມຄອງນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ**

- ກຳນົດຕົວຂັບເຄື່ອນດ້ານການຄ້າລະດັບກຸ່ມບ້ານ ຫຼື ສະຫະກອນ ເພື່ອເຮັດໃຫ້ສາມາດເຂົ້າເຖິງແຫຼ່ງຊັບພະຍາກອນ (ເຊັ່ນ ທີ່ດິນ), ການບໍລິການວຽກງານສົ່ງເສີມ ແລະ ສິນເຊື່ອ ລວມເຖິງຂໍ້ກຳນົດດ້ານລະບຽບການທີ່ກ່ຽວຂ້ອງຈາກພາກລັດ.
- ປກຈິດສຳນຶກ ແລະ ໃຫ້ຄວາມຮູ້ດ້ານການຈັດສັນຄຸ້ມຄອງຊັບພະຍາກອນເຄື່ອງປ່າຂອງດົງໃຫ້ແກ່ຊາວກະສິກອນຂະໜາດນ້ອຍ ເພື່ອຊ່ວຍໃຫ້ເຂົາເຈົ້າໃຫ້ຄວາມສຳຄັນ ແລະ ເອົາໃຈໃສ່ຕໍ່ການນຳໃຊ້ຊີວະນາໆ ພັນແບບຍືນຍົງ.
- ການຄ້າ-ການຕະຫຼາດເຄື່ອງປ່າຂອງດົງ ມີຄວາມຮຽກຮ້ອງໃຫ້ມີນະໂຍບາຍ, ການຈັດຕັ້ງ/ອົງກອນ ແລະ ລະບຽບກົດໝາຍ.

## 2. ຈຸດປະສົງ

- ປະເມີນມູນຄ່າທາງເສດຖະກິດ: ກໍລະນີ ເຄື່ອງປ່າຂ້ອງດົງ 11 ຊະນິດ
- ວິເຄາະ ແລະ ກັ່ນກອງເຕັກນິກທີ່ມີປະສິດທິຜົນສູງໃນການຈັດສັນ, ການນໍາໃຊ້ ເຄື່ອງປ່າຂ້ອງດົງແບບຍືນິງ
- ກໍານົດຮູບແບບການຜະລິດ, ການຕະຫຼາດ ແລະ ກ້ານຈັດລະບຽບຂອງອົງການຈັດຕັ້ງທີ່ເໝາະສົມເພື່ອການຄ້າ-ຕະຫຼາດເຄື່ອງປ່າຂອງດົງ

## 3. ວິທີການ

- ທົບທວນເອກະສານ: ພິຈາລະນາ ແລະ ກວດສອບຂໍ້ມູນ ແລະ  ເອກະສານຕ່າງໆ ຈາກບັນດາໂຄ້ງດານຄົ້ນຄວ້າ ແລະ ພັດທະນາ ໃນອາດີດ ທີ່ກ່ຽວຂ້ອງການຄຸ້ມຄອງຈັດສັນເຄື່ອງປ່າຂອງດົງ ແລະ ຊີ່ວິດການເປັນຢູ່ ເຊັ່ນ ໂຄງການຄຸ້ມຄອງປ່າໄມ້ແບບຍືນຍົ້ງ, ໂຄງການອະນຸລັກຊີວະນາໆພັນກະສິກໍາ ແລະ ອື່ນໆ.
- ການປຶກສາຫາ ແລະ ກວດສອບຄວາມຖືກຕ້ອງຢູ່ຂັ້ນທ້ອງຖິ່ນ ເພື່ອສະທ້ອນຄືນຜົນຮັບຈາກກ້ານທົບທວນຄືນເອກະສານມືສອງ: ແຂວງອຸດົມໄຊ, ແຂວງ ຄໍາມ່ວນ ແລະ ແຂວງ ເຊກອງ; ແຂວງລະສອງເມືອງ.

## 4. ຄາດຄະເນຜົນໄດ້ຮັບ

- ມູນຄ່າທາງເສດຖະກິດຂອງເຄື່ອງປ່າຂອງດົງ
- ຮູບແບບການຜະລິດ, ການປຸງແຕ່ງ ແລະ ການຕະຫຼາດ ເຄື້ອງປ່າຂອງດົງທີ່ເໝາະສົມສໍາລັບຊາວກະສິກອນ ໂດຍອີງໃສ່ປັດໄຈເສດຖະກິດ-ສັງຄົມ ແລະ ພູມສັນຖານ.
- ສະເໜີແນະນະໂຍບາຍ, ອົງການຈັດຕັ້ງ ແລະ ຂອບກົດໝາຍທີ່ຫຼຸດຜ່ອນຂັ້ນຕອນການປະຕິບັດການຈັດສັນ, ການຄ້າ ແລະ ການຕະຫຼາດ ເຄື່ອງປ່າຂອງດົງ.
- ສະເໜີແນະວິທີປະຕິບັດດ້ານການຈັດຕັ້ງ ເພື່ອພັດທະນາກົນໄກການປະສານງານການດ້ານການຄຸ້ມຄອງ, ການຄ້າ-ການຕະຫຼາດເຄື່ອງປ່າຂອງດົ່ງ.

# 5. ຜົນໄດ້ຮັບ:

## 5.1 ມູນຄ່າທາງເສດຖະກິດຂອງ ຄປດ





*ຖ່າຍຮູບ: ວົງຄໍາຮໍ່, ສ. ມີນາ 2022 ທີ່ ບໍລິສັດພັດທະນາ-ສົ່ງເສີມກະສິກໍາ; ກໍາລັງຮັບຊື້ປໍສາ ນໍາປະຊາຊົນ-ເມືອງປາກອູ, ແຂວງ ຫຼວງພະບາງ*




Source: MoIC, 2022

ການສົ່ງອອກສິນຄ້າເຄື່ອງປ່າຂອງດົງ ໄປຕ່າງປະເທດ ມີມູນຄ່າ >5 ລ້ານ ໂດລາ ໃນປີ 2016 ເພີ່ມຂຶ້ນເປັນ >25 ລ້ານ ໂດລາ ໃນປີ 2021. ສປ ຈີນ, ໄທ ແລະ ຫວຽດນາມ ແມ່ນຕະຫຼາດສົ່ງອອກຕົ້ນຕໍ ໂດຍສະເພາະ ການສົ່ງອອກສິນຄ້າເຄື່ອງປ່າຂອງດົງ ໄປຍັງປະເທດຫວຽດນາມ ຫຼາຍກວ່າໝູ່

# ມູນຄ່າສິ່ງອອກເຄື່ອງປ່າຂອງດົງ: ກໍລະນີສຶກສາ 11 ຊະນິດ

| ລ/ດ | ຊະນິດ ຄປດ | ມູນຄ່າສິ່ງອອກ ປະຈໍາປີ 2016 - 2021 (x 1000 USD) | | | | | | ຕະຫຼາດ |
|---|---|---|---|---|---|---|---|---|
| | | 2016 | 2017 | 2018 | 2019 | 2020 | 2021 | |
| 1 | ຢາງຍານ | 237.93 | 702.03 | 438.62 | 370.81 | 392.18 | 447.24 | ອິຍູ (>80%) |
| 2 | ໝາກແໜ່ງ | 113.4 | 189 | 120.78 | 315.32 | 273.35 | 7,210.44 | ຫວຽດນາມ (>89%) |
| 3 | ຊາປ່າ | 592.65 | 519.15 | 885.98 | 1,515.64 | 1,326.39 | 3,185.43 | ໄທ & ຈີນ (>86%) |
| 4 | ດອກແຂມ | 387.98 | 641.91 | 355.34 | 1,500.60 | 1,091.30 | 1,902.41 | ຈີນ (>48%) |
| 5 | ປໍສາ | 432.67 | 245.62 | 276.68 | 213.79 | 431.39 | 509.7 | ຈີນ (>40%) |
| 6 | ໄມ້ປ່ອງ | 825.22 | 961.97 | 1,422.76 | 1,623.12 | 1,585.69 | 4,018.42 | ຫວຽດນາມ (>72%) |
| 7 | ຫວາຍ | 6.83 | 21.31 | 29.12 | 14.27 | 22.2 | 28.26 | ອາເມຣິກາ (>47%) |
| 8 | ເຄືອແຫມ | 94.29 | 149 | 104.12 | 873.9 | 269.45 | 325.84 | ຈີນ (100%) |
| 9 | ເປືອກບົງ | 26.36 | 82.72 | 216.08 | 108.13 | 84 | 47.81 | ໄທ (>69%) |
| 10 | ເຫັດແດງ | 2.85 | 25.53 | 25.27 | 529.85 | 98.1 | 2.09 | ຈີນ (>98%) |
| 11 | ຂີ້ຄັ່ງ | 139 | - | 69.39 | - | - | - | ເມື່ອກ່ອນອິນເດຍ |
| | ລວມ | 2,859.18 | 3,538.23 | 3,944.13 | 7,065.42 | 5,574.05 | 17,677.64 | |

Source: MOIC, 2022










- ຢາງຍານ ມີມູນຄ່າສິ່ງອອກ ໝັ້ນຄົງ , > 80% ແມ່ນສິ່ງອອກໄປ ຕະຫຼາດອິຍູ.
- ຊາປ່າ ແລະ ໝາກແໜ່ງ ມີມູນຄ່າ ສິ່ງອອກ ສູງຂຶ້ນ ໃນປີ 2021






# ສົມທຽບມູນຄ່າທາງເສດຖະກິດຂອງໂຄຕ້າທີ່ຕ້ອງການ, ໂຄຕ້າອະນຸມັດ, ຜົນຜະລິດ ແລະ ສົ່ງອອກເຄື່ອງປ່າຂອງດົງ: 11 ຊະນິດ




- ມູນຄ່າຂອງໂຄ້ຕາທີ່ຕ້ອງການຈາກຕ້ອງຖິ່ນ ແມ່ນສູງກວ່າໂຄຕ້າທີ່ອະນຸມັດ ແລະ ຜົນຜະລິດ ເຄື່ອງປ່າຂອງດົງ ຢ່າງຊັດເຈນ.
- ຊະນິດພັນເຄື່ອງປ່າຂອງດົງທີ່ມີມູນຄ່າສູງ ແມ່ນ ໝາກແໜ່ງ, ເຫັດແດງ, ໄມ້ປ່ອງ, ຢາງຍານ.
- **ການເສຍອາກອນ ແລະ ພາສີຂາອອກ** ແມ່ນນຳ**ໃຊ້ລາຄາຂັ້ນຕ່ຳ**ໃນການຄິດໄລ່ ຈຶ່ງຜົນໃຫ້ມູນຄ່າສົ່ງອອກຕ່ຳກວ່າມູນຄ່າຜົນຜະລິດ.
- ເຫັດແດງ ເຫັນວ່າມີຕົວເລກສົ່ງອອກຕ່ຳກວ່າ ຜົນຜະລິດ ອາດແມ່ນຍ້ອນການສົ່ງສິນຄ້າຜ່ານ ດ່ານທ້ອງຖິ່ນ

Source: DoF, 2020, PAFOs, 2021; MoIC, 2022

# 5.2 ລະບົບ ແລະ ເຕັກນິກການຄຸ້ມຄອງເຄື່ອງປ່າຂອງດົງ



# 5.3ກ ການຈັດສັນ ແລະ ນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ

- ເຫັດແດງ
- ໜໍ່ໄມ້
- ຫວາຍ
- ເຄືອແຫມ
- ຊາປ່າ
- ດອກແຂມ
- ເປືອກບົງ
- ໝາກແໜ່ງ
- ປໍສາ
- ຢາງຍານ
- ຂີ້ຄັ່ງ

**ຂໍ້ຄວນເອົາໃຈໃສ່ໃນການວາງແຜນຈັດສັນ**

ເຕັກນິກການຈັດສັນປ່າໄມ້ແບບຍືນຍົງ: ກຳນົດລະບົບການຂຸດຄົ້ນຄວ້າທີ່ເໝາະສົມ ເຊັ່ນ: ກຳນົດຮອບວຽນທີ່ເໝາະສົມໃນການຂຸດຄົ້ນເຄືອແຫມ

ຊາຄຸນນະພາບສູງ ແມ່ນກ່ຽວຂ້ອງກັບເຂດນິເວດ-ພູມອາກາດສະເພາະ ໄປຄຽງຄູ່ກັບການນຳໃຊ້ເຕັກນິກການຈັດການທີ່ເໝາະສົມ

ລະບົບການຄຸ້ມຄອງຈັດສັນທີ່ມີປະສິດທິພາບ: ການລະບົບການຂຸດຄົ້ນ ຫຼື ເກັບກູ້ ປະຈຳປີ

ຕ້ອງການລັກສະນະພື້ນທີ່ເໝາະສົມ ເຊັ່ນ: ປໍສາ ໃຫ້ຜົນຜະລິດໃນເຂດດິນຊຸ່ມຊື່ນ ຫຼື ເຂດລ້ອງແມ່ນ້ຳ.

ຕ້ອງການຮອບວຽນການເຮັດໄຮ່ຍາວ: >15 ປີ ແລະ ສາມາດເກີດໄດ້ໃນເຂດພູມອາກາດສະເພາະຖິ່ນ (ຄວາມສູງຈາກໜ້ານ້ຳທະເລ 700 ແມັດ ຂຶ້ນໄປ

*ຄັດເລືອກພັນໄມ້ທີ່ເໝາະສົມ ເພື່ອລ້ຽງຄັ່ງ ເຊັ່ນ ໄມ້ ເປົ້າ, ຖົ່ວແຮ່, ໄມ້ສາມສາ ແລະ ອື່ນໆ.*

**ຂໍ້ຈຳກັດ ແລະ ສິ່ງທ້າຍ**

ການສົ່ງເສີມຜະລິດກະສິກຳເປັນສິນຄ້າສົ່ງອອກຢ່າງແຂງແຮງ ຕ້ອງການພື້ນທີ່ຫຼາຍຂຶ້ນ; ປະຊາຊົນນິຍົມກັນຫັນໄປປູກພືດເສດຖະກິດ ເຊັ່ນ ມັນຕົ້ນ, ສາລີ, ໝາກເດືອຍ ແລະ ອື່ນໆ

ພື້ນທີ່ປ່າໄມ້ຖືກທຳລາຍ ແລະ ຊຸດໂຊມ ຈາກການພັດທະນາ ແລະ ຂະຫຍາຍພື້ນທີ່ຜະລິດເປັນສິນຄ້າ

ຂາດຈິດສຳນຶກ ແລະ ຄວາມຮູ້ໃນການຈັດສັນປ່າໄມ້ແບບຍືນຍົງ ກໍ່ໃຫ້ເກີດການຂຸດຄົ້ນແບບດັບສູນ

ເຄື່ອງປ່າຂອງດົງແຕ່ລະຊະນິດຕ້ອງການ ຕ້ອງການເຂດນິເວດ-ພູມອາກາດສະເພາະ ໃນການຈະເລີນເຕີບໂຕ ແລະ ໃຫ້ຜົນຜະລິດ.

ການກຳນົດຮອບວຽນການເຮັດໄຮ່ ຕ່ຳກວ່າ 8 ປີ: ສົ່ງຜົນໃຫ້ເນື້ອທີ່ປ່າເລົ່າຍານຫຼຸດລົງ ແລະ ຄຸນນະພາບດິນຊຸດໂຊມ

# 5.3ຂ ການຄ້າ-ການຕະຫຼາດເຄື່ອງປ່າຂອງດົງແບບຍືນຍົງ

- ເຫັດແດງ
- ໜໍ່ໄມ້
- ຫວາຍ
- ເຄືອແຫມ
- ຊາປ່າ
- ດອກແຂມ
- ເປືອກບົງ
- ໝາກແໜ່ງ
- ປໍສາ
- ຢາງຍານ
- ຂີ້ຄັ່ງ

ຂໍ້ຄວນເອົາໃຈໃສ່ດ້ານການຄ້າ ແລະ ການຕະຫຼາດ

ການຮັກສາ ແລະ ປັບປຸງຄຸນນະພາບສິນຄ້າເຄື່ອງປ່າຂອງດົງ ເພື່ອສ້າງໂອກາດໃນການສ້າງມູນຄ່າເພີ່ມ ໂດຍຜ່ານກົນໄກການເກັບກູ້ ແລະ ການປຸງແຕ່ງ ທີ່ເໝາະສົມ

ເພີ້ມທະວີຄວາມເຂັ້ມແຂງດ້ານການຕະຫຼາດ ໃຫ້ມີຄວາມໝັ້ນຄົງ ໂດຍການເຊື່ອມໂຍງຄວາມຕ້ອງການຕະຫຼາດເຖິງຜູ້ຜະລິດ ແລະ ຜູ້ມີສ່ວນຮ່ວມ ໃນຕ່ອງໂສ້ມູນຄ່າ

ຂໍ້ຈຳກັດ ແລະ ສິ່ງທ້າຍ

ຄວາມຮູ້ ແລະ ທັກສະດ້ານການປຸງແຕ່ງ ເຄື່ອງປ່າຂອງດົງ ຍັງຈຳກັດ ແລະ ຂາດຄວາມເອົາໃຈໃສ່

ຄວາມຕ້ອງການຂອງຕະຫຼາດຕ່າງປະເທດ ບໍ່ມີຄວາມໝັ້ນຄົງ ໃນຂະນະທີ່ຄວາມຕ້ອງການຕະຫຼາດພາຍໃນ ແມ່ນມີຄວາມຈຳກັດ

ການປົນປອນຕະຫຼາດເຄື່ອງປ່າຂອງດົງໃນຂັ້ນທ້ອງຖິ່ນ ແມ່ນພົບເຫັນຕະຫຼອດ ເຮັດໃຫ້ຄຸນນະພາບຂອງສິນຄ້າບໍ່ຮັບປະກັນ ຫຼື ມີສິ່ງເຈືອປົນ

ມີການເພິ່ງພາອາໄສຕະຫຼາດເຄື່ອງປ່າຂອງດົງ ຢູ່ປະເທດໃກ້ຄຽງ ເຊັ່ນ ຈີນ, ໄທ ແລະ ຫວຽດ ໃນຂະນະທີ່ການເຊື່ອມໂຍງຕະຫຼາດພາກພື້ນອື່ນ ແມ່ນຈຳກັດ.

ຂາດມາດຖະຖານຄຸນະພາບສິນຄ້າເຄື່ອງປ່າຂອງດົງ ໃນແຕ່ລະປະເພດສິນຄ້າ

# 5.3ງ ນະໂຍບາຍພັດທະນາເຄື່ອງປ່າຂອງດົງແບບຍືນຍົງ

- ເຫັດແດງ
- ໜໍ່ໄມ້
- ຫວາຍ
- ເຄືອແຫມ
- ຊາປ່າ
- ດອກແຂມ
- ເປືອກບົງ
- ໝາກແໜ່ງ
- ປໍສາ
- ຢາງຍານ
- ຂີ້ຄັ່ງ

**ຂໍ້ຄວນເອົາໃຈໃສ່ດ້ານນະໂຍບາຍ**

- ສ້າງແຜນດຳເນີນງານຄຸ້ມຄອງນຳໃຊ້ເຄື່ອງປ່າຂອງດົງແບບຍືນຍົງ ເລັ່ງໃສ່ສ້າງຜົນປະໂຫຍດໃຫ້ຊາວກະສິກອນ, ຍູ້ແຮງການຄ້າຂາຍແບບໂປ່ງໃສ ແລະ ເພີ່ມປະສິດທິພາບໃຫ້ທ້ອງຖິ່ນໃນການປຸງແຕ່ງ ສ້າງມູນຄ່າເພີ່ມ
- ພັດທະນາຄວາມອາດສາມາດຂອງຊາວກະສິກອນໃນຕ່ອງໂສ້ມູນຄ່າ ເພື່ອເພີ່ມໂອກາດໃນການພັດທະນາຄຸນນະພາບສິນຄ້າ ແລະ ການບໍລິການ
- ຂາດຂໍ້ມູນຂ່າວສານດ້ານທ່າແຮງບົ່ມຊ້ອນຂອງສິນຄ້າເຄື່ອງປ່າຂອງດົງ
- ລະບົບການອະນຸມັດໂກຕ້າເຄື່ອງປ່າຂອງດົງ ຍັງບໍ່ຮັບກັນຄວາມຍືນຍົງ ເນື່ອງຈາກຂາດຂໍ້ມູນຄວາມອາດສາມາດຂອງແຫຼ່ງຊັບພະຍາກອນ.

**ຂໍ້ຈຳກັດ ແລະ ສິ່ງທ້າທາຍ**

- ການເກັບພາສີອາກອນສິນຄ້າເຄື່ອງປ່າຂອງດົງຈາກສວນປູກ ຍັງເກັບໃນອັດຕາຂອງສິນຄ້າຈາກປ່າທຳມະຊາດ
- ການບັງຄັບໃຊ້ກົດໝາຍສົ່ງເສີມການລົງທຶນ ໃນເຂດຫ່າງໄກສອກຫຼີກ ແມ່ນຍັງຈຳກັດ ໂດຍສະເພາະແມ່ນນະໂຍບາຍຍົກເວັ້ນພາສີອາກອນ
- ການວາງແຜນນຳໃຊ້ທີ່ດິນຍັງແມ່ນສິ່ງທີ່ຈຳເປັນຫຼາຍ ໃນການຄຸ້ມຄອງເຄື່ອງປ່າຂອງດົງແບບຍືນຍົງ
- ລະບົບການກວດກາສິນຄ້າເຄື່ອງປ່າຂອງດົງ ແມ່ນມີຫຼາຍຂັ້ນຕອນ
- ຄ່າໃຊ້ຈ່າຍການຢັ້ງຢືນປ່າໄມ້ ແມ່ນຢູ່ໃນອັດຕາທີ່ສູງຫຼາຍສຳລັບເຄື່ອງປ່າຂອງດົງ

# 5.4 ສະເໜີແນະວິທີປະຕິບັດດ້ານການຈັດຕັ້ງ ເພື່ອພັດທະນາກົນໄກການປະສານງານການດ້ານການຄຸ້ມຄອງ, ການຄ້າ-ການຕະຫຼາດເຄື່ອງປ່າຂອງດົງ.

- ເຫັດແດງ
- ໜໍ່ໄມ້
- ຫວາຍ
- ເຄືອແໜມ
- ຊາປ່າ
- ດອກແຂມ
- ເປືອກບົງ
- ໝາກແໜ່ງ
- ປໍສາ
- ຢາງຍານ
- ຂີ້ຄັ່ງ

→

ສ້າງ ແລະ ພັດທະນາສະຫະກອນກະເສດ ຕາມທ່າແຮງບົ່ມຊ້ອນເຄື່ອງປ່າຂອງດົງ:

1. ການຈັດແບ່ງປະເພດທີ່ດິນໃຫ້ເໝາະສົມກັບການຜະລິດເຄື່ອງປ່າຂອງດົງ.
2. ລົງທະບຽນພື້ນທີ່ເຄື່ອງປ່າຂອງດົງຂອງບ້ານ.
3. ເສີມຂະຫຍາຍເຕັກນິກການຜະລິດເຄື່ອງປ່າຂອງດົງແບບຍືນຍົງ
4. ການນຳໃຊ້ເຕັກນິກການຜະລິດເຄື່ອງປ່າຂອງດົງລະຫວ່າງກັນຢ່າງມີປະສິດທິຜົນ.
5. ເພີ່ມທະວີການເຂົ້າເຖິງຂໍ້ມູນຕະຫຼາດເຄື່ອງປ່າຂອງດົງ ແລະ ຄວາມໝັ້ນຄົງຂອງຕະຫຼາດຜະລິດຕະພັນເຄື່ອງປ່າຂອງດົງ (ລາຄາ ແລະ ຄວາມຕ້ອງການ).

ຄຳຖາມສົນທະນາ

1. ທ່ານ ມີຂໍ້ຄິດເຫັນແນວໃດ ຕໍ່ກັບສ້າງ ແລະ ພັດທະນາສະຫະກອນກະເສດ ຕາມທ່າແຮງບົ່ມຊ້ອນເຄື່ອງປ່າຂອງດົງ ໃນແຕ່ລະເຂດ?
2. ທ່ານເຫັນວ່າ ຄວນມີກົນໄກທີ່ເໝາະສົມແນວໃດ? ເພື່ອເພີ່ມປະສິດທິພາບໃນການເຊື່ອມໂຍງລະຫວ່າງ ຜູ້ຜະລິດ ແລະ ຕະຫຼາດ.